LANEXANG
Securities Public Company

# ຕະຫຼາດທຶນລາວ

ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ

## ຄວາມຮູ້ເບື້ອງຕົ້ນຕະຫຼາດທຶນລາວ

ເດືອນ ມິຖຸນາ ປີ 2013

ສາລະບານ

ຄວາມຮູ້ເບື້ອງຕົ້ນ

1. ພາບລວມຂອງຕະຫຼາດທຶນລາວ
2. ການລົງທຶນ
3. ສຳລັບນັກລົງທຶນທີ່ຈະຊື້ຂາຍຫຼັກຊັບກັບຕະຫຼາດຫຼັກຊັບລາວ
4. ຮຸ້ນ BCEL & EDL-GEN

**ຄຳສັບ**

LSX ຕະຫຼາດຫຼັກຊັບລາວ

IPO ການອອກຮຸ້ນຄັ້ງທຳອິດ

LO ຄຳສັ່ງຊື້ຂາຍແບບເຈາະຈົງລາຄາ

LXS ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ

BOL ທະນາຄານແຫ່ງ ສ ປ ປ ລາວ

USD ໂດລາສະຫະລັດອາເມລິກາ

**ຄວາມຮູ້ເບື້ອງຕົ້ນ ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ**

ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນເປັນບໍລິສັດຮ່ວມທຶນລະຫວ່າງບໍລິສັດຫຼັກຊັບຮຸ້ນສ່ວນ ຊາຄອມແບງ ແລະ ທະນາຄານພັດທະນາລາວ ບໍລິສັດໄດ້ຮັບການສ້າງຕັ້ງຢ່າງເປັນທາງການດ້ວຍທຶນຈົດທະບຽນ 100 ຕື້ (12.5 ລ້ານໂດລາ) ອອກໃບອະນຸຍາດສ້າງຕັ້ງໂດຍກະຊວງແຜນການ ແລະ ການລົງທຶນເລກທີ 166-10 ແລະ ໂດຍກະຊວງອຸດສະຫະກໍາ ແລະ ການຄ້າເລກທີ4343 ລົງວັນທີ 17 ພະຈິກ 2010. ບໍລິສັດກໍ່ໄດ້ຮັບອະນຸຍາດດໍາເນີນທຸລະກິດຫຼັກຊັບໂດຍຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເລກທີ 001 ລົງວັນທີ 1 ທັນວາ 2010 ໂດຍສະໜອງການບໍລິການເຕັມຮູບແບບເພື່ອໃຫ້ແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດໃນຕະຫຼາດຫຼັກຊັບລາວ

ໂຄງສ້າງການດໍາເນີນທຸລະກິດແບ່ງອອກເປັນ3 ພາກສ່ວນຄື ພາກສ່ວນການຊື້ຂາຍຫຼັກຊັບ, ການໃຫ້ຄໍາປຶກສາການລົງທຶນ ແລະ ການຄົ້ນຄວ້າວິໄຈ ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນຍັງເປັນບໍລິສັດຫຼັກຊັບແຫ່ງທໍາອິດທີ່ດໍາເນີນທຸລະກິດໃນ ສປປ.

ບໍລິສັດຮ່ວມທຶນລະຫວ່າງບໍລິສັດຫຼັກຊັບຮຸ້ນສ່ວນ ຊາຄອມແບງ ເປັນບໍລິສັດໃນເຄືອຂອງກຸ່ມ ຊາຄອມແບງ ເຊິ່ງຖືກສ້າງຕັ້ງໃນເດືອນກັນຍາ 2006 ດ້ວຍທຶນຈົດທະບຽນເບື້ອງຕົ້ນ 300 ຕື້ໂດ່ງ (16.67 ລ້ານໂດລາສະຫະລັດ), ດໍາເນີນທຸລະກິດຊື້ຂາຍຫຼັກຊັບ, ຝາກຮຸ້ນ, ການຄໍ້າປະກັນການຈໍາໜ່າຍຮຸ້ນ ແລະ ການລົງທຶນຕ່າງໆ ທະນາຄານພັດທະນາລາວສ້າງຕັ້ງຂື້ນໃນວັນທີ 9 ເມສາ 2003 ໂດຍການລວມໂຕກັນລະຫວ່າງ ທະນາຄານທຸລະກິດລັດ 2 ແຫ່ງຄື ທະນາຄານລາວໃໝ່ຈໍາກັດ ແລະ ທະນາຄານລ້ານຊ້າງຈໍາກັດ.ປະຈຸບັນກະຊວງການເງິນຖືຮຸ້ນທະນາຄານພັດທະນາລາວ 100 %.

ເນື່ອງຈາກເປັນບໍລິສັດແຫ່ງທໍາອິດ ບໍລິສັດໄດ້ນໍາສະເໜີການເຄື່ອນໄຫວຊື້ຂາຍຫຼັກຊັບທີ່ຫຼາກຫຼາຍໃຫ້ແກ່ຕະຫຼາດທຶນໃໝ່ແຫ່ງນີ້ ພະແນການາຍໜ້າຊື້ຂາຍຫຼັກຊັບມີຄວາມມຸ້ງໝັ້ນສະໜອງການບໍລິການທາງດ້ານການເງິນໃຫ້ແກ່ລູກຄ້າຂອງພວກເຮົາດ້ວຍຄວາມພໍໃຈສູງສຸດ ແລະ ປະສົບຜົນສໍາເລັດໃນອະນາຄົດ

ດ້ວຍການບໍລິການ ແລະ ຜະລິດຕະພັນທີ່ຫຼາກຫຼາຍ ແລະ ທັນສະໄໝກໍ່ຄືສໍານັກງານຂອງພວກເຮົາທີ່ເຄື່ອນໄຫວທົ່ວປະເທດ ເຮັດໃຫ້ບໍລິສັດໄດ້ເຮັດບົດບາດສໍາຄັນເປັນບໍລິສັດຊື້ຂາຍຫຼັກຊັບໃຫ້ແກ່ນັກ

ລົງທຶນໝົດທຸກຄົນທີ່ມີຄວາມແຕກຕ່າງທາງດ້ານຄວາມຕ້ອງການລົງທຶນທີ່ຕັ້ງພູມມີສາດ ແລະ ປະເພດຂອງນັກລົງທຶນເອງ(ປະເພດບຸກຄົນ ສະຖາບັນ ພາຍໃນ ແລະ ຕ່າງປະເທດ).

❶ ການບໍລິການຊື້-ຂາຍຫຼັກຊັບ

ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ ມີຄວາມມຸ້ງໝັ້ນເພື່ອເຮັດໃຫ້ຕົນເອງເປັນບໍລິສັດທີ່ດີທີ່ສຸດໃນອຸດສະຫະກຳທຸລະກິດຫຼັກຊັບ ດ້ວຍນຳສະເໜີທີ່ຫຼາກຫຼາຍໃຫ້ແກ່ຕະຫຼາດການເງິນລາວ ດ້ວຍການບໍລິການ ແລະ ຜະລິດຕະພັນທີ່ຫຼາກຫຼາຍ ແລະ ທັນສະໄໝ່ ຄືສຳນັກງານຂອງພວກເຮົາທີ່ເຄື່ອນໄຫວ ດ້ວຍເຫດ, ເຮັດໃຫ້ບໍລິສັດໄດ້ເຮັດບົດບາດສຳຄັນເປັນບໍລິສັດຊື້-ຂາຍຫຼັກຊັບໃຫ້ແກ່ນັກລົງທຶນໝົດທຸກຄົນທີ່ມີຄວາມແຕກຕ່າງທາງດ້ານຄວາມຕ້ອງການລົງທຶນ ທີ່ຕັ້ງພູມມີສາດ ແລະ ປະເພດຂອງນັກລົງທຶນເອງ (ປະເພດບຸກຄົນ ສະຖາບັນ ພາຍໃນ ແລະ ຕ່າງປະເທດ).

*ການບໍລິການຊື້-ຂາຍຫຼັກຊັບຢູ່ຕ່າງປະເທດ*

ການບໍລິການຊື້-ຂາຍຫຼັກຊັບຢູ່ຕ່າງປະເທດ ເຊິ່ງໄດ້ທີມງານມືອາຊີບທີ່ຈະໃຫ້ການບໍລິການທີ່ດີໃຫ້ແກ່ນັກລົງທຶນທີ່ສົນໃຈຊື້-ຂາຍຫຼັກຊັບທີ່ປະເທດອັງກິດ, ຈີນ, ຫຼື ຫວຽດນາມ.

❷ ການໃຫ້ຄຳປຶກສາດ້ານການເງິນ

ມີໜ້າທີ່ນຳພາບັນດາບໍລິສັດໄປສູ່ຈຸດປ່ຽນແປງຂອງການເຕີບໃຫຍ່ຂະຫຍາຍຕົວ ແລະ ຊ່ວຍໃຫ້ດຳເນີນທຸລະກິດໃຫ້ປະສົບຜົນສຳເລັດ ແລະ ມີປະສິດທິພາບທີ່ສຸດ ດ້ວຍຄວາມເຂົ້າໃຈຕະຫຼາດ ແລະ ລູກຄ້າຢ່າງເລິກເຊິ່ງ, ບໍລິສັດໄດ້ເປັນຜູ້ນຳທາງດ້ານການໃຫ້ຄຳປຶກສາທາງດ້ານການເງິນ ດ້ວຍວິຊາການມືອາຊີບ ແລະ ການບໍລິການທີ່ຫຼາກຫຼາຍ ພວກເຮົາຈະຊ່ວຍໃຫ້ລູກຄ້າຂອງພວກເຮົາບໍລິຫານທາງດ້ານການເງິນແບບມີຍຸດທະສາດ ແລະ ວິໄສທັດໃນອະນາຄົດ

► **ໃຫ້ຄຳປຶກສາໃນການຫັນເປັນມະຫາຊົນ** ພວກເຮົາໄດ້ສະໜອງການບໍລິການໃຫ້ຄຳປຶກສາໃນການປ່ຽນແປງໂຄງສ້າງບໍລິສັດສຳລັບທຸລະກິດທີ່ຕ້ອງການຫັນເປັນມະຫາຊົນ ອີງຕາມເງື່ອນໄຂຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

► **ຈົດທະບຽນ ແລະ ອອກຮຸ້ນເພີ່ມເຕີມ** ພວກເຮົາສາມາດຮັບໃຊ້ຕະຫຼາດພາຍໃນ ແລະ ຕ່າງປະເທດໄດ້

► **ໃຫ້ຄໍາປຶກສາທາງດ້ານການເງິນ** ພວກເຮົາສະໜອງການບໍລິການປະເມີນບໍລິສັດແບບອິດສະຫຼະ ອຸດສາຫະກໍາຫຼັກຊັບໂຄງການ, ຊັບສິນ ແລະ ການປ່ຽນແປງໂຄງສ້າງບໍລິສັດ

► **ໃຫ້ຄໍາປຶກສາໃນການຄວບລວມບໍລິສັດ** ພວກເຮົາໄດ້ກໍານົດບໍລິສັດຄູ່ຮ່ວມທີ່ມີສັກກະຍະພາບ ຕໍ່ຈາກນັ້ນກໍ່ພັດທະນານະໂຍບາຍ ແລະ ນໍາພາໄປສູ່ຂະບວນການຂວບລວມກິດຈະການ

► ໃຫ້ຄໍາປຶກສາການປັບປ່ຽນໂຄງສ້າງບໍລິສັດເປັນບໍລິສັດຮ່ວມຮຸ້ນ ສະໜອງການໃຫ້ຄໍາປຶກສາແບບມືອາຊີບໃນການບໍລິຫານບໍລິສັດ ຊ່ວຍຄະນະອໍານວຍການ ແລະ ຜູ້ຄວບຄຸມດູແລໃນການປະເມີນຫຼັກການປະຕິບັດໃນການບໍລິຫານ

► ໃຫ້ຄໍາປຶກສາສໍາລັບແຜນພັດທະນາຍຸດທະສາດ ຊ່ວຍບໍລິສັດໃນການກໍານົດ ແລະ ປະຕິບັດຍຸດທະສາດການເຕີບໂຕທີ່ມີສັກກະຍະພາບ ເພື່ອຮັບປະກັນການເຕີບໂຕໃນອະນາຄົດ

► ສະໜອງການບໍລິການນັກລົງທຶນສໍາພັນໃຫ້ແກ່ບໍລິສັດມະຫາຊົນ ເຊື່ອມໂຍງລະຫວ່າງນັກລົງທຶນ ແລະ ບໍລິສັດໂດຍຜ່ານເວັບໄຊ ຫຼື ເອກະສານອື່ນໆ

❸ ການຄົ້ນຄ້ວາວິໄຈ

ໄດ້ອີງໃສ່ແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືທີ່ສຸດ ການຄົ້ນຄວ້າຂອງພວກເຮົາຄວາມເຂົ້າໃຈແບບເລິກເຊິ່ງໃຫ້ແກ່ນັກລົງທຶນທາງເສດຖະກິດມະຫາພາກ, ອຸດສະຫະກໍາທີ່ກ່ຽວຂ້ອງ,ຕະຫຼາດຫຼັກຊັບ ສິ່ງດັ່ງກວ່າກໍ່ເປັນຮາກຖານຂອງການບໍລິການໃຫ້ຄໍາປຶກສາ

ຄວາມໄດ້ປຽບແບບປຽບທຽບຂອງພະແນກຄົ້ນຄ້ວາແມ່ນຄວາມສາມາດໃນການສ້າງບົດລາຍງານທີ່ມີຄວາມຖືກຕ້ອງ ແລະ ໜ້າເຊື່ອຖືທີ່ສຸດ, ລວມທັງບົດລາຍງານເສດຖະກິດມະຫາພາກ, ອຸດສະຫະກໍາ, ບໍລິສັດ, ແລະ ບົດລາຍງານພິເສດ ພະແນກຄົ້ນຄ້ວາໄດ້ເຮັດການຄົ້ນຄ້ວາ 4 ຮູບປະເພດເຊັ່ນ

► ບົດຄົ້ນຄວ້າມະຫາພາກ
► ບົດວິເຄາະພື້ນຖານ
► ບົດວິເຄາະທາງເທັກນິກ
► ການສະໜອງຂໍ້ມູນອື່ນໆ

**ການບໍລິການຂອງພວກເຮົາປະກອບມີ:**

| ການຊື້-ຂາຍຫຼັກຊັບ | ໃຫ້ຄຳປຶກສາທາງດ້ານການເງິນ | ການຄົ້ນຄວ້າ |
|---|---|---|
| ເປີດບັນຊີຫຼັກຊັບ ບັນຊີເງິນຝາກ ແລະ ສະເໜີຂໍລະຫັດນັກລົງທຶນຕ່າງປະເທດ | ຕະຫຼາດກາສານທຶນ | ເຮັດຄົ້ນຄວ້າດ້ານກາສານທຶນ |
| ກາສານທຶນທີ່ຈົດທະບຽນ ໃຫ້ສິນເຊື່ອເພື່ອຊື້-ຂາຍຫຼັກຊັບ (ອານາຄົດ) | ຕະຫຼາດກາສານໜີ້ ອອກຜະລິດຕະພັນ | ຄົ້ນຄວ້າດ້ານເສດຖະກິດມະຫາພ ເປັນສູນລວມຂໍ້ມູນ |
| ເຮັດໜ້າທີ່ຈັດການອອກຮຸ້ນຄັ້ງທຳອິດ | ໃຫ້ຄຳປຶກສາດ້ານການອອກ ແລະ ຈົດທະບຽນຮຸ້ນ | ໃຫ້ຄຳປຶກສາທາງດ້ານການລົງທຶນ |
| ດູແລ ແລະ ຮັບຝາກຫຼັກຊັບ | ດ້ານການຄວບລວມ ແລະ ເຂົ້າຊື້ກິດຈະການ | ຄຳປຶກສາທາງດ້ານລົງທຶນໃນຫຼັກຊັບປະເ ພດຕ່າງໆ |
| | ຄ້ຳປະກັນການຈຳໜ່າຍຮຸ້ນ | ເຮັດບົດວິເຄາະທາງດ້ານເທັກນິກ |

**ຈຸດປະສົງ**

- ສ້າງກຳໄລສູງສຸດໃຫ້ຜູ້ຖືຮຸ້ນ ແລະ ລູກຄ້າຂອງເຮົາ
- ໃຫ້ບໍລິການທາງການເງິນ, ບໍລິການນາຍໜ້າ ແລະ ບໍລິການໃຫ້ເປັນທີ່ປຶກສາໃຫ້ແກ່ທຸກທຸລະກິດໃນ ສປປ ລາວ, ລວມທັງນັກລົງທຶນພາຍໃນ ແລະ ຕ່າງປະເທດ
- ພັດທະນາທາງດ້ານການເງິນໃນລາວຢ່າງຕໍ່ເນື່ອງເພື່ອປັບປຸງຄວາມສຳພັນທາງເສດຖະກິດລະຫວ່າງປະເທດລາວ ແລະ ປະເທດຫວຽດນາມ.

**ພາລະໜ້າທີ່**

ພາລະໜ້າທີ່ ຂອງ ບໍລິສັດ ຫຼັກຊັບລ້ານຊ້າງມະຫາຊົນແມ່ນເພື່ອສ້າງມູນຄ່າໃຫ້ນັກລົງທຶນເພື່ອເຄືອຂ່າຍກ່ຽວກັບການເງິນທີ່ເປັນມືອາຊີບຂອງພວກເຮົາ ແລະ ເພື່ອເຮັດໃຫ້ລູກຄ້າຂອງເຮົາມີບໍລິການທາງດ້ານການເງິນທີ່ກວ້າງຂວາງທີ່ສຸດ ພວກເຮົາຈະເອົາໃຈໃສ່ຈັດຈ່ຜະລິດຕະພັນ ແລະ ທຸລະກິດໃຫ້ມີ

ການຈະເລີນເຕີບໂຕໄປເທື່ອລະກ້າວ ໃຫ້ສອດຄ່ອງກັບໂລກໂລກາພິວັດທີ່ບໍ່ຢຸດນີ້ ຫຼັງຄວາມເຊື່ອໝັ້ນໄວ້ວາງໃຈໄດ້ແກ່ນັກລົງທຶນ

**ສໍາລັບຂໍ້ມູນກ່ຽວກັບການບໍລິການຂອງພວກເຮົາທັງໝົດແມ່ນສາມາດຕິດຕໍ່ລາຍລະອຽດດັ່ງລຸ່ມນີ້**

<table>
<tr><td colspan="3">ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ (LXS)<br>ຢູ່ຊັ້ນ 5, ອາຄານຕະຫຼາດຫຼັກຊັບລາວ ບ້ານໂພນທັນເໜືອ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ<br>ໂທ: (+856)-21 265 468 ແຟກ: (+856)-21 265 466 ຫຼື (+856)-21 265 465</td></tr>
<tr><td>ການຊື້-ຂາຍຫຼັກຊັບ<br><br>ທ່ານ ຮຸນ ຕີນ ກາວ<br>ຫົວໜ້າພະແນກນາຍໜ້າຊື້ຂາຍຫຼັກຊັບ<br>ອີເມວ: cao.ht@lxs.com.la</td><td>ການໃຫ້ຄໍາປຶກສາທາງການເງິນ<br><br>ທ່ານ ໂງ ທຽນ ກີ<br>ຮອງອໍານວຍການ<br>ອີເມວ: ky.nt@sbsc.com.vn</td><td>ພາກສ່ວນອື່ນໆທີ່ກ່ຽວຂ້ອງ<br><br>ທ່ານ ສຸລິໄຊ ທິບວົງໄຊ<br>ຮອງອໍານວຍການ<br>ອີເມວ: soulixay.t@lxs.com.la</td></tr>
</table>

**ສິ່ງສໍາຄັນທີ່ຄວນຮູ້ສໍາລັບການລົງທຶນໃນການສານທຶນໃນ ສປປ ລາວ**

| ດັດສະນີ | ກົດເກນ |
|---|---|
| ຂອບເຂດການຖືຮຸ້ນຂອງຕ່າງປະເທດ | - ຂຶ້ນກັບກົດລະບຽບທີ່ວາງອອກຂອງບໍລິສັດຈົດທະບຽນ |
| ການຊໍາລະສະສາງ | T+2 ໝາຍເຖິງ ການຊໍາລະສະສາງເກີດຂື້ນໃນອີກສອງວັນ |
| ພາສີລາຍໄດ້ | 0.1% ຂອງມູນຄ່າຂາຍທັງໝົດ |
| ສະກຸນເງິນຊື້-ຂາຍຫຼັກຊັບ | ກີບ |
| ທະນາຄານຕົວແທນຫຼາຍແຫ່ງ | ບໍ່ອະນຸຍາດ |
| ຜະລິດຕະພັນ | - ການສານທຶນ<br>- ບໍ່ມີການຂາຍຊອດ<br>- ບໍ່ມີການສານອະນຸພັນ |
| ການເປີດເຜີຍຂໍ້ມູນ | - ກອງປະຊຸມຜູ້ຖືຮຸ້ນ<br>- ຂໍ້ມູນກ່ຽວກັບເງິນເປັນ, ການອອກຮຸ້ນເພີ່ມທຶນ ແລະ ອື່ນໆ |

## 1. ພາບລວມຕະຫຼາດຫຼັກຊັບລາວ

ເສດຖະກິດລາວມີການຂະຫຍາຍຕົວຢ່າງໄວວາໃນຊ່ວງ 5 ປີ ທີ່ຜ່ານມາ, ລະດົມເງິນລົງທຶນຈຳນວນຫຼວງຫຼາຍເພື່ອຕອບສະໜອງຄວາມຕ້ອງການຂອງການລົງທຶນ ແລະ ການຂະຫຍາຍຕົວທາງທຸລະກິດ ຄວາມສາມາດໃນການລະດົມທຶນໃນລາວມີຂໍ້ຈຳກັດເພາະໃນເມື່ອກ່ອນບໍ່ມີຕະຫຼາດທຶນທີ່ຍັ້ງຍືນ ການຄຳນຶງເຖິງການຂາດແຄນເງິນທຶນໄລຍະຍາວທີ່ໃຊ້ໃນການຂັບເຄື່ອນທຸລະກິດ ລັດຖະບານລາວຈຶ່ງໄດ້ຮ່ວມງານກັບ Korea Exchange (KRX) ຊຶ່ງເປັນຜູ້ປະກອບການລາຍໃຫຍ່ ເປັນອັນດັບ 5 ໃນອາຊີ, ບໍລິສັດໄດ້ຮ່ວມທຶນມູນຄ່າ 20 ລ້ານໂດລາສະຫະລັດ ເພື່ອສ້າງຕະຫຼາດຫຼັກຊັບແຫ່ງທຳອິດໃນປະເທດລາວ. ຕະຫຼາດຫຼັກຊັບລາວໄດ້ກໍ່ຕັ້ງຂື້ນເມື່ອວັນທີ 10/10/2010 ເປັນຄວາມພະຍາຍາມເພື່ອຈະໃຫ້ມີຊ່ອງທາງລົງທຶນໃໝ່ຕໍ່ກັບເສດຖະກິດລາວ ແລະ ເພື່ອຫຼຸດຜ່ອນຄວາມທຸກຍາກໃຫ້ແກ່ປະເທດຊາດ. ຕະຫຼາດຫຼັກຊັບໄດ້ເປີດໃຫ້ມີການຊື້ຂາຍຮຸ້ນໃນວັນທີ 11/01/2011, ເປັນການສ້າງໂອກາດທີ່ສຳຄັນຢ່າງຍິ່ງໃຫ້ກັບທັງພາກລັດ ແລະ ພາກເອກະຊົນເພື່ອລະດົມທຶນຈາກນັກລົງທຶນ ແລະ ຂະຫຍາຍທຸລະກິດຂອງພວກເຂົາເອງ. ບໍລິສັດທີ່ໂດດເດັ່ນໃນລາວແມ່ນສາຍການບິນລາວ, ບໍລິສັດໄຟຟ້າລາວ, ທະນາຄານການຄ້າຕ່າງປະເທດລາວ, ບໍລິສັດເບຍລາວ ແລະ ບໍລິສັດລາວໂທລະຄົມ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບໄດ້ພິຈາລະນາເຖິງການມີສ່ວນຮ່ວມຂອງຕ່າງປະເທດໃນຕະຫຼາດຫຼັກຊັບລາວ. ມີສະຖາບັນຕ່າງປະເທດຈຳນວນໜຶ່ງມີຄວາມສົນໃຈ ໂດຍສະເພາະໃນຕະຫຼາດເກີດໃໝ່ນີ້ລວມໄປເຖິງອັນດາທະນາຄານເອກະຊົນຈາກປະເທດເພື່ອນບ້ານ ແລະ ບໍລິສັດພັດທະນາໂຄງການໄຟຟ້າພະລັງນ້ຳໃນປະເທດໄທ, ຈີນ ແລະ ພະມ້າ ກະແສເງິນລົງທຶນຕ່າງປະເທດຕໍ່ເສດຖະກິດຂອງລາວໂດຍສະເພາະແມ່ນໃນຂະແໜງຊັບພະຍາກອນທຳມະຊາດແມ່ນໄດ້ຮັບ ແລະ ຈະຍັງເປັນແຮງຂັບເຄື່ອນຫຼັກຂອງການພັດທະນາເສດຖະກິດລາວ ແລະ ການເຂົ້າຮ່ວມຂອງພວກເຂົາເປັນສິ່ງທີ່ຈຳເປັນທີ່ຈະເຮັດໃຫ້ເສດຖະກິດລາວມີການຈະເລີນເຕີບໂຕເບັ່ງບານຂື້ນ.

### ແຜນການທຸລະກິດ 3 ປີ

- **ເປົ້າໝາຍໂດຍລວມ:** ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ ເປັນບໍລິສັດທີ່ມີອິດທິພົນສູງທຽບກັບບໍລິສັດອື່ນໆ ຊຶ່ງໄດ້ປະກອບສ່ວນຢູ່ໃນຕະຫຼາດຫຼັກຊັບລາວມາຕັ້ງແຕ່ທຳອິດ ໃນຂະນະທີ່ຕະຫຼາດຍັງຢູ່ ໃນຊ່ວງກຳລັງພັດທະນາທີມງານນັກວິເຄາະການເງິນ ແລະ ນາຍໜ້າຂອງພວກ

ເຮົາຈະມີໂອກາດສະສົມປະສົບການ ແລະ ນໍາໃຊ້ຄວາມຮູ້ທີ່ຈໍາເປັນໃຫ້ແກ່ການພັດທະນາຕະຫຼາດທຶນລາວ ບໍລິສັດຕັ້ງເປົ້າໝາຍ ທີ່ຈະເປັນບໍລິສັດແຖວໜ້າໃນປະເທດລາວໃຫ້ໄດ້ພາຍໃນ 3 ປີ.

- **ຍຸດທະສາດ:**
  - o ພັດທະນາລະບົບໄອທີທີ່ທັນສະໄໝ ໂດຍມີລະບົບການປະຕິບັດງານທີ່ມີສະຖຽນລະພາບ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ລູກຄ້າ ປະຈຸບັນ ບໍລິສັດມີສ່ວນແບ່ງຕະຫຼາດຢູ່ປະມານ 40 ເປີເຊັນ
  - o ໄດ້ຮັບການໜູນຊ່ວຍຢ່າງເຂັ້ມແຂງທາງດ້ານການເງິນຈາກທະນາຄານພັດທະນາລາວ, ບໍລິສັດຫຼັກຊັບຊາຄອມແບງ ແລະ ກຸ່ມບໍລິສັດຊາຄອມແບງ, ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນສາມາດສະໜອງຜະລິດຕະພັນທາງການເງິນທີ່ມີສັກກະຍະພາບ ກໍຄືເຄື່ອງມືທາງການເງິນຂອງຕະຫຼາດເງິນ ແລະ ຕະຫຼາດທຶນຕາມຄວາມສ່ຽງຂອງຕະຫຼາດ.
  - o ພວກເຮົາມີທີມງານນັກວິເຄາະ ທີ່ປຶກສາການລົງທຶນທີ່ມີຄວາມຮູ້ ຄວາມສາມາດສູງທີ່ຈົບຈາກພາຍໃນປະເທດ, ຈາກຫວຽດນາມ, ສະຫະລັດອາເມລິກາ ອົດສະຕາລີ ແລະ ປະເທດຕ່າງໆ. ພວກເຮົາຍັງໄດ້ຝຶກອົບຮົມພະນັກງານຢູ່ພາຍໃນ ແລະ ຕ່າງປະເທດຢ່າງຕໍ່ເນື່ອງເພື່ອພັດທະນາຄຸນະພາບ ແລະ ຄວາມສາມາດແກ່ທີມງານດ້ານການເງິນຂອງພວກເຮົາ.
  - o ທີມງານນັກວິໄຈຄົ້ນຄວ້າອອກບົດວິໄຈຄົ້ນຄວ້າເປັນໄລຍະ ເປັນແຫຼ່ງຂໍ້ມູນທີ່ໜ້າເຊື່ອຖືໃຫ້ແກ່ນັກລົງທຶນ ດ້ວຍປະສົບການທີ່ໄດ້ຮັບຈາກຫວຽດນາມ ບໍລິສັດໄດ້ປັບປຸງ ແລະ ຂະຫຍາຍການບໍລິການທາງດ້ານນາຍໜ້າ ແລະ ໃຫ້ຄໍາປຶກສາໃຫ້ແກ່ສະຖາບັນການເງິນ ບໍລິສັດຍັງມີເປົ້າໝາຍສະໜອງການໃຫ້ຄໍາປຶກສາໃຫ້ແກ່ບໍລິສັດສັນຊາດຫວຽດນາມທີ່ດໍາເນີນທຸລະກິດຢູ່ ສປປ ລາວ. ໃນຂະນະດຽວກັນ ບໍລິສັດກໍຈະເຊື່ອມໂຍງເພື່ອດຶງດູດການລົງທຶນຈາກຫວຽດນາມ ກໍາປູເຈຍ ສິງກະໂປມາສູ່ລາວ

## *ບໍລິສັດຈົດທະບຽນ

ໂດຍໃນທ້າຍປີ 2011, ຈໍານວນບໍລິສັດຈົດທະບຽນມີ 2 ບໍລິສັດຄື (ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ) ດ້ວຍມູນຄ່າຕະຫຼາດລວມກັນທັງໝົດ 582 ລ້ານໂດລາສະຫະລັດ

ຮູບເສັ້ນສະແດງດັດສະນີ ຕລຊລ




ຮູບເສັ້ນສະແດງລາຄາຮຸ້ນ ບີຊີອີເອວ



ຮູບເສັ້ນສະແດງລາຄາຮຸ້ນ ອີດີເອວ ເຈັນ




## 1.1 ຕະຫຼາດຫຼັກຊັບລາວ

| ຕະຫຼາດຫຼັກຊັບລາວ | |
|---|---|
| ເລີ້ມປະຕິບັດການ | 11/01/2011 |
| ຮຸ້ນຈົດທະບຽນ | 02 stocks (BCEL & EDL-Gen) |
| ມູນຄ່າຕະຫຼາ | ປະມານ 698.46 ລ້ານໂດລາສະຫະລັ |
| ດ້ານສະພາບຄ່ອງຕະຫຼາດ | ໂດຍສະເລ່ຍ 6 ເດືອນ 2013:<br>ປະລິມານ: 68,732 ຮຸ້ນ/ມື້<br>ມູນຄ່າ: 61,121USD/ມື້ |
| ສັດສ່ວນມູນຄ່າຕະຫຼາດ | 87.78% ຂະແໜງໄຟຟ້າ & 12.22% ຂະແໜງທະນາຄານ |
| ດັດສະນີສູງສຸດ | 1,240.19 ຈຸດ (ຂອງປີ 2012) |
| ດັດສະນີຕ່ຳສຸດ | 877.44 ຈຸດ (ຂອງປີ 2012) |
| ເລີ່ມຕົ້ນປີ2011 | 1000 ຈຸດ ໃນວັນທີ11/01/2011 |
| ທ້າຍປີ 2012 | 1,214.77 ຈຸດ ໃນວັນທີ 26/12/2012 |
| ປະຈຸບັນ | 1,340.86 as of 28 June 2013 |

## 1.2 ມູນຄ່າຕະຫຼາດ

ມູນຄ່າຕະຫຼາດຂອງຮຸ້ນຢູ່ໃນຕະຫຼາດຫຼັກຊັບລາວປະຈຸບັນໄດ້ຫຼຸດລົງ ເນື່ອງຈາກການຫຼຸດລົງຂອງລາຄາຫຼັກຊັບປະຈຸບັນ ແລະ ການທີ່ບໍ່ມີຮຸ້ນໃໝ່ເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບ. ໃນປີ 2013, ພວກເຮົາຄາດວ່າຈະມີຮຸ້ນມາຈົດທະບຽນເພີ່ມຂຶ້ນຢູ່ໃນຕະຫຼາດຫຼັກຊັບລາວ

## 1.3 ການຈັດແບ່ງຕາມຂະແໜງອຸດສາຫະກຳ

ພວກເຮົາມີຮຸ້ນຈົດທະບຽນພຽງ 2 ຮຸ້ນເທົ່ານັ້ນຢູ່ໃນຕະຫຼາດຄື ອີດີເອວ-ເຈັນ- ຂະແໜງໄຟຟ້າ ກວມເອົາ 78 % ຂອງມູນຄ່າຕະຫຼາດ ແລະ ຮຸ້ນບີຊີອີເອວກວມເອົາ 22 %. ຂະໜາດຂອງມູນຄ່າຕະຫຼາດຂອງຕະຫຼາດຫຼັກຊັບລາວຍັງໜ້ອຍຫຼາຍ ແຕ່ພວກເຮົາກໍ່ຄາດວ່າຈະມີຮຸ້ນຈົດທະບຽນເພີ່ມຂຶ້ນໃນອານາຄົດອັນໃກ້ນີ້

## 2. ການລົງທຶນໃນການສານທຶນ

### 2.1 ຂໍ້ມູນທົ່ວໄປ

| ຕະຫຼາດຫຼັກຊັບລາວ | |
|---|---|
| ຂໍ້ມູນ | ດັດສະນີ ຕລຊ - [www.lsx.com.la] |
| ວັນທຳການຊື້ຂາຍ ແລະ ສະກຸນເງິນ | ວັນຈັນເຖິງວັນສຸກ (ຍົກເວັ້ນມື້ພັກຂອງ ສປປ ລາວ, ສາມວັນຣັດການສຸດທ້າຍຂອງແຕ່ລະປີ ແລະ ໃນເວລາມີເຫດການປ່ຽນແປງສຸກເສີນຕໍ່ລະບົບເສດຖະກິດ) ສະກຸນເງິນທີ່ນໍາໃຊ້ໃນການຊື້ຂາຍແມ່ນເງິນກີບ |
| ວັນພັກ | ວັນທີ1 ມັງກອນ- 8 ມີນາ - ປີໃໝ່ລາວ - ວັນກຳມະກອນສາກົນ ວັນສ້າງຕັ້ງທະນາຄານກາງ - ວັນຊາດລາວ. |
| ກະດານລາຄາຮຸ້ນ | ກະດານຫຼັກຕະຫຼາດຫຼັກຊັບລາວ(LSX) |
| ລະບົບການຊື້-ຂາຍ | ຜ່ານບໍລິສັດຫຼັກຊັບເທົ່ານັ້ນ |
| ເວລາຊື້-ຂາຍ ແລະ ການຈັບຄູ່ | ການຈັບຄູ່ຊື້ຂາຍມີ 6 ຄັ້ງຄື ເວລາ 9:00, 9:30, 10:00, 10:30, 11:00 ແລະ 11:30 |
| ຄຳສັ່ງ-ຂາຍ | ລາຄາດຽວ |
| ລາຄາເປີດ/ປິດ | ລາຄາເປີດ: ແມ່ນລາຄາປິດໃນຊ່ວງຊື້ຂາຍທີ1, ສ່ວນລາຄາອ້າງອີງແມ່ນລາຄາປິດມື້ກ່ອນ.<br>ລາຄາປິດ: ແມ່ນລາຄາປິດຊ່ວງສຸດທ້າຍຂອງວັນຊື້ຂາຍ |
| ພາກສ່ວນຕະຫຼາດ | ຮຸ້ນ ພັນທະບັດ(ຍັງບໍ່ມີ) |

| | | |
|---|---|---|
| ວິທີການ ແລະ ກົດລະບຽບການຊື້-ຂາຍ | + ການຈັບຄູ່ຊື້-ຂາຍ<br>ນັກລົງທຶນສາມາດຊື້ ແລະ ຂາຍຫຼັກຊັບດຽວກັນໄດ້, ແຕ່ຕ້ອງຢູ່ໃນຊ່ວງທີ່ຕ່າງກັນ<br>+ ລໍາດັບສິດຂອງການຈັບຄູ່-ຊື້ຂາຍ<br>o ລາຄາ: ລາຄາສະເໜີຂາຍທີ່ຕໍ່າກວ່າ ແລະ ລາຄາສະເໜີຊື້ທີ່ສູງກວ່າຈະໄດ້ຮັບການຈັບຄູ່ຊື້ຂາຍກ່ອນ<br>o ເວລາ: ລາຄາສະເໜີຂາຍທີ່ຕໍ່າກວ່າ ແລະ ລາຄາສະເໜີຊື້ທີ່ສູງກວ່າຈະໄດ້ຮັບການຈັບຄູ່ຊື້ຂາຍກ່ອນ<br>o ປະລິມານ: ປະລິມານທີ່ສະເໜີຂາຍສູງກວ່າ‘ | |
| ຂອບເຂດການປ່ຽນແປງຂອງລາຄາ | + ຮຸ້ນ ການປ່ຽນແປງແມ່ນ ±5% ຂອງລາຄາປິດຂອງມື້ກ່ອນໜ້ານີ້ (Base Price) ໃນທຸກໆວັນທໍາການ. ໃນກໍລະນີລາຄາຮຸ້ນທີ່ຕໍ່າກວ່າ 1000 ກີບ, ການປ່ຽນແປງຂອງລາຄາຈະຢູ່ໃນ ±50 ກີບ ຂອງທຸກໆວັນ<br>+ ລາຄາຂອງຮຸ້ນທີ່ເຂົ້າຕະຫຼາດມື້ທໍາອິດຈະປ່ຽນແປງຢູ່ລະຫວ່າງ-10% -100% ຂອງລາຄາທີ່ສະເໜີຂາຍໃນຕະຫຼາດຂັ້ນທີ | |
| ຊ່ວງຫວ່າງການປ່ຽນແປງ | ລາຄາຕໍ່ຮຸ້ນ (PPS) | ຊ່ວງຫວ່າງການປ່ຽນແປງ |
| | PPS < 10,000 ກີບ | 50 ກີບ |
| | 10,000 ກີບ ≤ PPS < 50,000 ກີບ | 100 ກີບ |
| | 50,000 ກີບ ≤ PPS < 100,000 ກີບ | 200 ກີບ |
| | PPS ≥ 100,000 ກີບ | 500 ກີບ |
| ການຊໍາລະສະສາງ | ມີຈະການຊໍາລະສະສາງໃນບັນຊີໃນມື້ທີ 2 | |
| ຫົວໜ່ວຍການຊື້ຂາຍ | 1 ຮຸ້ນ | |

## 2.2 ເງື່ອນໄຂຂອງການຈົດທະບຽນຮຸ້ນ

### (1) ເງື່ອນໄຂທີ່ເປັນຕົວເລກ

1. ໄລຍະການດໍາເນີນກິດຈະການ ວັນທີສະເໜີກວດກາຄວາມເໝາະສົມການຈົດທະບຽນຜູ້ສະເໜີຈົດທະບຽນຕ້ອງດໍາເນີນກິດຈະການແລ້ວຢ່າງໜ້ອຍ 3 ປີ ຕິດຕໍ່ກັນນັບຕັ້ງແຕ່ວັນສ້າງຕັ້ງ ແລະ ຕ້ອງໝັ້ນໃຈວ່າບໍລິສັດຈະບໍ່ລົ້ມລະລາຍ
2. ຂະໜາດຂອງທຸລະກິດ ວັນທີສະເໜີກວດກາຄວາມເໝາະສົມການຈົດທະບຽນຜູ້ສະເໜີຈົດທະບຽນຕ້ອງໄດ້ຕາມມາດຖານສະເພາະໃນແຕ່ລະຫົວຂໍ້ລຸ່ມນີ້

   ກ. ຈໍານວນຮຸ້ນທີ່ຈົດທະບຽນຕ້ອງມີຕໍ່າສຸດ 100,000 ຮຸ້ນ

   ຂ. ທຶນຈົດທະບຽນຄວນມີຕໍ່າສຸດ 10 ຕື້ກີບ

3. ການແຈກຢາຍຮຸ້ນ ແຕ່ລະມາດຖານດັ່ງລຸ່ມນີ້ ຕ້ອງຖືກຕາມວັນທີສະເໜີ ສໍາລັບການກວດກາຄວາມເໝາະສົມການຈົດທະບຽນ:

   ກ. ຈໍານວນຮຸ້ນທີ່ຖືໂດຍຜູ້ຖືຮຸ້ນລາຍຍ່ອຍຕ້ອງຫຼາຍກວ່າ 100 ລາຍ ນັບຕັ້ງແຕ່ວັນທີ່ຈົດທະບຽນ;

   ຂ. ຈໍານວນຮຸ້ນທີ່ຖືໂດຍຜູ້ຖືຮຸ້ນລາຍຍ່ອຍຕ້ອງຫຼາຍກວ່າ 10% ຂອງຮຸ້ນທີ່ອອກຈໍາໜ່າຍທັງໝົດ

4. ການດໍາເນີນທຸລະກິດ / ຖານະການເງິນ

   ກ. ຍອດຂາຍປີທີ່ຜ່ານມາຕ້ອງຢ່າງຕໍ່າ 30 ຕື້ກີບ;

   ຂ. ໃນໄລຍະ 3 ປີທີ່ຜ່ານມາ, ລາຍໄດ້ສຸດທິຢ່າງຕໍ່າຕ້ອງ 2 ປີ; ແລະ

   ຄ. ບໍ່ມີການດ້ອຍຄ່າຂອງຮຸ້ນທຶນໃນປີຜ່ານມາ

### (2) ການຮຽກຮ້ອງທີ່ບໍ່ມີຕົວເລກ

1. ຄໍາເຫັນຂອງນັກກວດສອບ: ຄໍາເຫັນຂອງນັກກວດສອບຕໍ່ບົດລາຍງານການເງິນຢ່າງໜ້ອຍ 3 ປີຫຼ້າສຸດ ຕ້ອງແມ່ນຄໍາເຫັນແບບບໍ່ມີເງື່ອນໄຂ;
2. ຂໍ້ຈໍາກັດຂອງການໂອນຮຸ້ນ ຕ້ອງບໍ່ມີຂໍ້ຈໍາກັດໃນການໂອນຮຸ້ນ;
3. ສັນຍາການບໍລິການຮັບຝາກຫຼັກຊັບ ຜູ້ສະເໜີຕ້ອງເຮັດສັນຍາບໍລິການຮັບຝາກຫຼັກຊັບກັບຕະຫຼາດຫຼັກຊັບລາວ.
4. ການພິມຈໍາໜ່າຍໃບຢັ້ງຢືນຮຸ້ນ ຜູ້ສະເໜີຕ້ອງພິມຈໍາໜ່າຍໃບຢັ້ງຢືນຮຸ້ນຢ່າງສະໝໍ່າສະເໝີ; ແລະ
5. ຄະດີທີ່ຍັງຄ້າງຄາ: ຕ້ອງບໍ່ມີຂໍ້ຂັດແຍ່ງກັນຊຸ່ນ ບໍ່ມີຄະດີຄວາມຕ່າງໆທີ່ຍັງຄ້າງຄາ

ເຊິ່ງອາດມີຜົນກະທົບຢ່າງຫຼາຍຕໍ່ການບໍລິຫານບໍລິສັດ

**(3) ມາດຖານອື່ນໆ**

ມາດຖານທີ່ເປັນຕົວເລກ ແລະ ບໍ່ເປັນຕົວເລກເພີ່ມເຕີມ, ຕະຫຼາດຫຼັກຊັບລາວຈະພິຈາລະນາບັນຫາຕ່າງໆລຸ່ມນີ້ໃນການຕັດສິນໃຈເຖິງຄວາມເໝາະສົມຂອງຜູ້ສະເໜີຈົດທະບຽນຄັ້ງທໍາອິດ:

1. ກໍາໄລທີ່ໄປໄດ້ດີ: ຜູ້ສະເໜີຕ້ອງໝັ້ນໃຈໃນທຸລະກິດວ່າມີກໍາໄລຕໍ່ເນື່ອງ ແລະ ການດໍາເນີນທຸລະກິດໃນອະນາຄົດ
2. ການບໍລິຫານຈັດການທີ່ໝັ້ນຄົງ ຜູ້ສະເໜີຕ້ອງບໍລິຫານທຸລະກິດໃຫ້ມີຄວາມຍຸຕິທໍາ ແລະ ວິທີການທີ່ໄວ້ວາງໃຈໄດ້;
3. ຄວາມເໝາະສົມ ແລະ ຄວາມຖືກຕ້ອງຂອງການເປີດເຜີຍຂໍ້ມູນຂອງບໍລິສັດ ຜູ້ສະເໜີຕ້ອງສາມາດເປີດເຜີຍຂໍ້ມູນໃນເວລາທີ່ກໍານົດ ແລະ ວິທີການທີ່ຖືກຕ້ອງ
4. ບັນຫາອື່ນໆທີ່ຕະຫຼາດຫຼັກຊັບລາວຄິດວ່າເໝາະສົມເຊັ່ນ ຄວາມສົນໃຈຂອງມວນຊົນ ແລະ ເພື່ອປົກປ້ອງນັກລົງທຶນ

## 2.3 ການອອກຮຸ້ນຄັ້ງທໍາອິດ ແລະ ການເຮັດການປະມູນ

ການອອກຮຸ້ນຄັ້ງທໍາອິດຢູ່ ສປປລາວ ແມ່ນໃນຮູບແບບການປະມູນເຊິ່ງບໍລິສັດຈະອອກຮຸ້ນພຽງບາງສ່ວນໃຫ້ແກ່ມວນຊົນ

ຫຼັງຈາກການອອກຮຸ້ນຄັ້ງທໍາອິດ ບໍລິສັດຈະຕ້ອງຈົດທະບຽນເຂົ້າຕະຫຼາດຫຼັກຊັບພາຍໃນ 90 ວັນ

ຂໍ້ມູນກ່ຽວກັບການປະມູນຈະຕ້ອງໄດ້ເຜີຍແຜ່ທາງເວັບໄຊ ຫຼື ວາລະສານທາງການເງິນຫຼັງຈາກການປະມູນ ແລະ ໜັງສືຊວນຊື້ຈະຕ້ອງໄດ້ອອກກ່ອນມີການອອກຈໍາໜ່າຍຮຸ້ນແກ່ມວນຊົນ

ນັກລົງທຶນພາຍໃນ ແລະ ຕ່າງປະເທດສາມາດເຂົ້າຮ່ວມປະມູນໄດ້ (ຖ້ານັກລົງທຶນຫາກປະຕິບັດຖືກຕ້ອງຕາມເງື່ອນໄຂທັງໝົດ)

## 3. ນັກລົງທຶນທີ່ຕ້ອງການຊື້ຂາຍໃນຕະຫຼາດຫຼັກຊັບລາວ

### 3.1 ຂໍ້ມູນທົ່ວໄປ

| ຊື່ | ການປະຕິບັດການ |
|---|---|
| ຕະຫຼາດຫຼັກຊັບລາວ | ຮັບການຈັບຄູ່ຊື້ຂາຍຈາກບໍລິສັດຫຼັກ<br>ອອກຂ່າວ ແລະ ບົດລາຍງານຈາກບໍລິສັດຈົດທະບຸ |
| ສູນຮັບຝາກຫຼັກຊັບ | ຮັບຝາກຫຼັກຊັບທັງໝົດຂອງນັກລົ<br>ສູນຊໍາລະສະສາງເງິນ ແລະ ຮຸ້ |
| ທະນາຄານຕົວແທນ | ຮັກສາເງິນສົດທັງໝົດຂອງນັກລົ<br>ຊໍາລະສະສາງເງິນສົດ<br>ຈ່າຍຄ່າທໍານຽມຊື້ຂາຍຫຼັກຊັບ ແລະ ພາສີຕາມຄໍາສັ່ງຂອງ<br>ລາຍງານການເຄື່ອນໄຫວ ແລະ ບັນຊີໃຫ້ແກ່ນັກລົງ<br>ສະໜອງການບໍລິການແລກປ່ຽນເງິນຕາຕ່າງປະເທ |
| ບໍລິສັດຫຼັກຊັບ | ຮັບຄໍາສັ່ງຊື້ຂາຍຫຼັກຊັບ ແລະ ປ້ອນຄໍາສັ່ງສູ່ຕະຫຼາດ<br>ສົ່ງຜົນການຊື້ຂາຍໃຫ້ແກ່ນັກລົ<br>ການບໍລິການອື່ນໆລວມມີ ໃຫ້ຄໍາປຶກສາກ່ຽວກັບການລົງທຶນ<br>ອອກບົດລາຍງານໃຫ້ແກ່ນັກລົງ |

### 3.2 ການເປີດບັນຊີຫຼັກຊັບກັບບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ

ນັກລົງທຶນທຸກຄົນທີ່ຈະລົງທຶນໃນການຊື້ຂາຍຫຼັກຊັບ ຈະຕ້ອງໄດ້ເປີດ 2 ບັນຊີຄື ບັນຊີເງິນຝາກຢູ່ທະນາຄານພັດທະນາລາວ (ຝາກປະຫຍັດ ຫຼື ກະແສລາຍວັນ) ແລະ ບັນຊີຊື້ຂາຍຫຼັກຊັບຢູ່ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ ໃນການຊື້ຫຼັກຊັບ ນັກລົງທຶນຈະຕ້ອງໂອນເງິນຈາກບັນຊີຢູ່ທະນາຄານພັດທະນາລາວໄປຫາບັນຊີຊື້ຂາຍຫຼັກຊັບຢູ່ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນດ້ວຍຈໍານວນເງິນທີ່ພຽງພໍກັບມູນຄ່າຫຼັກຊັບທີ່ຕ້ອງການຊື້ບວກກັບຄ່າທໍານຽມຊື້ຂາຍ

***ສໍາລັບການເປີດບັນຊີເງິນຝາກທີ່ທະນາຄານພັດທະນາລາວ**

1. ສໍາເນົາໜັງສືຜ່ານແດນ ຫຼື ບັດປະຈໍາຕົວ
2. ໃບສະເໜີຂໍເປີດບັນຊີເງິນຝາກ

(ສາມາດເປີດທີ່ໜ່ວຍບໍລິການຂອງທະນາຄານພັດທະນາລາວທີ່ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ)

***ສໍາລັບການເປີດບັນຊີຫຼັກຊັບກັບບໍລິສັດຫຼັກຊັບລ້ານຊ້າງ**

- ນັກລົງທຶນລາວ(ປະເພດບຸກຄົນ)

*ເອກະສານສໍາຄັນປະກອບມີ:*

1. ສໍາເນົາບັດປະຈໍາຕົວ (1 ສະບັບ)
2. ປື້ມບັນຊີເງິນຝາກກະແສລາຍວັນ ຫຼື ເງິນຝາກປະຢັດຈາກທະນາຄານພັດທະນາລາວ (1ສະບັບ)
3. ສັນຍາແຕ່ງຕັ້ງນາຍໜ້າຊື້ຂາຍຫຼັກຊັບ(2 ສະບັບ)
4. ໃບມອບສິດເຄື່ອນໄຫວຊື້ຂາຍຫຼັກຊັບ ແລະ ໃບມອບສິດໂອນເງິນ(ຖ້າຕ້ອງການ)

- ນັກລົງທຶນລາວ(ປະເພດສະຖາບັນ)

*ເອກະສານສໍາຄັນປະກອບມີ:*

1. ສໍາເນົາບັດປະຈໍາຕົວ/ໜັງສືຜ່ານແດນຂອງບຸກຄົນທີ່ເປັນຕົວແທນທາງກົດໝາຍ (ເຈົ້າຂອງ) ປະທານ, ຜູ້ອໍານວຍການ
2. ໃບທະບຽນທຸລະກິດ (2 ສະບັບ)
3. ໃບທະບຽນອາກອນທຸລະກິດ (2 ສະບັບ)
4. ປື້ມບັນຊີເງິນຝາກກະແສລາຍວັນຫຼື ເງິນຝາກປະຢັດຈາກທະນາຄານພັດທະນາລາວ (1 ສະບັບ)
5. ສັນຍາແຕ່ງຕັ້ງນາຍໜ້າຊື້ຂາຍຫຼັກຊັບ(2 ສະບັບ)

6, ໃບມອບສິດເຄື່ອນໄຫວຊື້ຂາຍຫຼັກຊັບ ແລະ ໃບມອບສິດໂອນເງິນ(ຖ້າຕ້ອງການ)

- ນັກລົງທຶນຕ່າງປະເທດ(ປະເພດບຸກຄົນ)

*ເອກະສານສໍາຄັນປະກອບມີ*

1. ສໍາເນົາໜັງສືຜ່ານແດນ(2 ສະບັບ)
2. ປື້ມບັນຊີເງິນຝາກກະແສລາຍວັນ ຫຼື ເງິນຝາກປະຢັດຈາກທະນາຄານພັດທະນາລາວ (1ສະບັບ)
3. ສັນຍາແຕ່ງຕັ້ງນາຍໜ້າຊື້ຂາຍຫຼັກຊັບ(2 ສະບັບ)
4. ໃບມອບສິດເຄື່ອນໄຫວຊື້ຂາຍຫຼັກຊັບ ແລະ ໃບມອບສິດໂອນເງິນ(ຖ້າຕ້ອງການ)
5. ແບບຟອມຂໍລະຫັດນັກລົງທຶນຕ່າງປະເທດ
6. ແບບຟອມກໍານົດຕົວແທນບໍລິສັດຫຼັກຊັບ

- ນັກລົງທຶນຕ່າງປະເທດ (ປະເພດສະຖາບັນ)

*ເອກະສານສໍາລັບປະກອບມີ*

1. ສໍາເນົາໜັງສືຜ່ານແດນຂອງບຸກຄົນທີ່ເປັນຕົວແທນທາງກົດໝາຍ (ເຈົ້າຂອງ), ປະທານ, ຜູ້ອໍານວຍການ
2. ກົດລະບຽບພາຍໃນຂອງບໍລິສັດ (3 ສະບັບ)
3. ໃບທະບຽນທຸລະກິດ (3 ສະບັບ)
4. ໃບທະບຽນອາກອນທຸລະກິດ (3 ສະບັບ)
5. ປຶ້ມບັນຊີເງິນຝາກກະແສລາຍວັນຈາກທະນາຄານພັດທະນາລາວ (1 ສະບັບ)
6. ສັນຍາແຕ່ງຕັ້ງນາຍໜ້າຊື້ - ຂາຍຫຼັກຊັບ (2 ສະບັບ)
7. ໃບມອບສິດເຄື່ອນໄຫວຊື້ຂາຍຫຼັກຊັບ ແລະ ໃບມອບສິດໂອນເງິນ (ຖ້າຕ້ອງການ)
8. ແບບຟອມຂໍລະຫັດນັກລົງທຶນຕ່າງປະເທດ
9. ແບບຟອມກໍານົດຕົວແທນບໍລິສັດຫຼັກຊັບ

(ເອກະສານທັງໝົດຕ້ອງມີລາຍເຊັນແທ້ທັງໝົດ (ບໍ່ສາມາດຮັບເອກະສານສໍາເນົາ))

**ກະລຸນາຕິດຕໍ່ ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ, ພະແນກນາຍໜ້າຊື້ຂາຍຫຼັກຊັບ ເພື່ອຮັບແບບຟອມທັງໝົດ, ຫຼື ຕິດຕໍ່: +856 21 265 461-3 (Email: lxs-brokerage@lxs.com.la)**

***ການໂອນເງິນ - (ສໍາລັບນັກລົງທຶນຕ່າງປະເທດ)**

### ການໂອນເງິນເຂົ້າ

ເນື່ອງຈາກຈະຕ້ອງມີເງິນພຽງພໍຢູ່ໃນບັນຊີທະນາຄານ ກ່ອນສັ່ງຊື້ຂາຍ ດັ່ງນັ້ນ ນັກລົງທຶນຈະຕ້ອງໂອນເງິນມາລ່ວງໜ້າກ່ອນການຊື້ຂາຍ ນັກລົງທຶນຈະຕ້ອງໂອນບັນຊີທະນາຄານແລ້ວກໍ່ໂອນ ຫຼື ສັ່ງໂອນເຂົ້າບັນຊີຫຼັກຊັບ ກ່ອນການຊື້ຂາຍ

### ການໂອນອອກ:

ນັກລົງທຶນສາມາດໂອນເງິນອອກກັບຄືນໄດ້ຫຼັງຈາກຊື້ເງິນຕາຕ່າງປະເທດແນວໃດກໍ່ຕາມ, ເນື່ອງຈາກເງິນຕາຕ່າງປະເທດຢູ່ລາວນັກລົງທຶນຈະຕ້ອງພິສູດແຫຼ່ງທີ່ມາຂອງທຶນໃຫ້ຖືກຕ້ອງຕາມລະບຽບກົດໝາຍເມື່ອຕ້ອງການໂອນເງິນຫຼາຍກວ່າ 10,000 ໂດລາຕໍ່ມື້

## 4.1 ການຈັບຄູ່ຊື້ຂາຍ

ນັກລົງທຶນອາດຈະເລືອກສົ່ງຄຳສັ່ງຊື້ຂາຍດ້ວຍວິທີທີ່ແຕກຕ່າງກັນຂອງບໍລິສັດຫຼັກຊັບ ບໍລິສັດເຮົາ ສາມາດສົ່ງຄຳສັ່ງຊື້ຂາຍໄດ້ດ້ວຍການຂຽນໃບຄຳສັ່ງຊື້ຂາຍ, ໂທລະສັບ, ອີເມວ ແລະ ແຟກ. ວິທີທີ່ນັກລົງທຶນຈະໃຊ້ຈະຕ້ອງລົງທະບຽນລ່ວງໜ້າ ຫຼັງຈາກນັ້ນບໍລິສັດຈະກວດສອບອີກວ່າຄຳສັ່ງຊື້ຂາຍນັ້ນຖືກຕ້ອງຫຼືບໍ່

ບໍລິສັດມີກົນໄກຄວາມປອດໄພສູງສຸດໃນການຮັກສາຄວາມລັບຂອງລູກຄ້າ ຂໍ້ມູນຂອງລູກຄ້າແມ່ນຈະຖືກຄຸ້ມຄອງດ້ວຍຫຼາຍລະດັບ

**ຄຳສັ່ງຊື້ຂາຍຈາກນັກລົງທຶນທີ່ສົ່ງມາຈະມີຂັ້ນຕອນດັ່ງລຸ່ມນີ້**




**ຄຳອະທິບາຍ**

4.1.1.1 ນັກລົງທຶນຈະຕ້ອງສົ່ງຄຳສັ່ງຊື້ຂາຍຕາມວິທີທີ່ຕົນເອງໄດ້ລົງທະບຽນໄວ້

4.1.1.2 ນາຍໜ້າຊື້ຂາຍຫຼັກຊັບຈະກວດສອບບັນຊີ ແລະສົ່ງຄຳສັ່ງໄປຍັງລະບົບຂອງຕະຫຼາດຫຼັກຊັບ

4.1.1.3 ນາຍໜ້າຮັບຜົນການຊື້ຂາຍຫຼັກຊັບຈາກລະບົບຕະຫຼາດຫຼັກຊັບ

4.1.1.4 ນາຍໜ້າແຈ້ງຜົນການຊື້ຂາຍໃຫ້ແກ່ນັກລົງທຶນ

## 4.2 ຂໍ້ມູນຄ່າທຳນຽມການຊື້ຂາຍຫຼັກຊັບທັງໝົດ

| ຄ່າທຳນຽມການຊື້ຂາຍຫຼັກຊັບ | ຊື້ | ຂາຍ |
|---|---|---|
| ຄ່ານາຍໜ້າ | 0.34% | 0.34% |
| ຄ່າທຳນຽມຂອງຕະຫຼາດຫຼັກຊັບລາວ | 0.35% | 0.35% |
| ຄ່າທຳນຽມຂອງ ຄລຕ | 0.20% | 0.20% |
| ຄ່າທຳນຽມປ້ອງກັນຄວາມສ່ຽງໃນການຊຳລະສະສາງ | 0.01% | 0.01% |
| ພາສີລັດຖະບານ | 0.00% | 0.30% |
| ລວມທັງໝົດ | 0.90% | 1.20% |

(ຄ່າທຳນຽມອາດຈະມີການປ່ຽນແປງ)

## 4.3 ກະດານສະແດງລາຄາຮຸ້ນຂອງບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ

ກະດານສະແດງລາຄາແມ່ນກະດານທີ່ສະແດງເຖິງຕົວເລກການຊື້ຂາຍຫຼັກຊັບທີ່ເກີດຂຶ້ນໃນຕະຫຼາດຫຼັກຊັບລາວທັງໝົດຢູ່ໃນກະດານນີ້ ນັກລົງທຶນສາມາດເຫັນລາຍລະອຽດຢ່າງຊັດເຈນ




### ອະທິບາຍກະດານສະແດງລາຄາ

(1) ດັດຊະນີຕະຫຼາດຫຼັກຊັບລາວ

(1.1) ດັດຊະນີ

(1.2) ສ່ວນປ່ຽນແປ

(1.3) ສ່ວນປ່ຽນແປງສະເລ່

(2) ຮຸ້ນຊື້-ຂາຍທັງໝົ

(3) ຍອດໃນການຊື້-ຂາຍທັງໝົດ

(4) ສ່ວນຕ່າງຂອງລາຄາມື້

(5) ສ່ວນຕ່າງຂອງລາຄາບໍ່ປ່ຽນແປງ

(6) ສ່ວນຕ່າງຂອງລາຄາລົ

(7) ຂໍ້ມູນໃນໄລຍະທີ 1-6

(7.1) ຈຳນວນຮຸ້ນຊື້-ຂາຍໃນໄລຍະທີ 1-6

(7.2) ຍອດທີ່ຊື້ຂາຍໃນໄລຍະທີ 1-6

(9) ລະຫັດຫຼັກຊັບ

(10) ລາຄາເປີດຕະຫຼາດ

(11) ລາຄາສູງສຸດ

(12) ລາຄາຕ່ຳສຸ

(13) ລາຄາຊື້ທີ່ດີທີ່ສຸ

(14) ຈັບຄູ່ກັນຊື້ຂ

(14.1) ລາຄາ

(14.2) ສ່ວນຕ່າງ

(14.3) ຮຸ້ນທັງໝົ

(15) ລາຄາຂາຍທີ່ດີທີ່ສຸ

(16) ຂໍ້ມູນລາຄາທີ່ຜ່ານມ

(16.1) ລາຄາສູງສຸດ

(8) ເລືອກພາສາ

(16.2) ລາຄາຕ່ຳສຸດ

(17) ລາຄາ ຮຸ້ນຈັບຄູ່ກັນໃນໄລຍະ1-6

(18) ຈຳນວນຮຸ້ນຈັບຄູ່ກັນໃນໄລ1-6

(19) ຕິດຕໍ່ສອບຖາມ

## 5. ຂໍ້ມູນທົ່ວໄປກ່ຽວກັບສອງຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ

| BCEL | |
|---|---|
| ຊື່ບໍລິສັດ | ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ |
| ຂະແໜງ | ທະນາຄານ |
| ສັນຍາລັກ | BCEL |
| ຈຳນວນຮຸ້ນທັງໝົດ | 136,577,600 |
| | *(ປະມານ 85.36 ລ້ານໂດລາ)* |
| **ສະຖິຕິລາຄາຈາກເດືອນມັງກອນປີ 2013 ຫາ ເດືອນ ມິຖຸນາປີ 2013** | |
| ສູງສຸດ (ກີບ/ຮຸ້ນ) | 8,200 |
| ຕ່ຳສຸດ(ກີບ/ຮຸ້ນ) | 7,300 |
| ປະລິມານສະເລ່ຍ (ຮຸ້ນ/ມື້) | 15,193 |
| ອັດຕາສ່ວນການຖືຄອງຂອງຕ່າງປະເທ (%) | 5% |
| ອັດຕາສ່ວນການຖືຄອງຂອງຕ່າງປະເທດທີ່ຍັງເ | 0 % ມາຮອດວັນທີ 28 ເດືອນ ມິຖຸນາປີ 2013 |
| ເງິນປັນຜົນ | |
| 2011 (ກີບ / ຫຸ້ນ) | 693.4 (ຫຼັງອາກອນ) |
| ລາຄາ ທ້າຍປີ 2011 (ກີບ / ຫຸ້ນ) | |
| 2012 (ກີບ/ ຫຸ້ນ) | 791.1 (ຫຼັງອາກອນ) |
| ລາຄາ ທ້າຍປີ 2012 (ກີບ / ຫຸ້ນ) | |

| EDL-GEN | |
|---|---|
| ຊື່ບໍລິສັດ | ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ |
| ຂະແໜງ | ໄຟຟ້າ |
| ສັນຍາລັກ | EDL-Gen |
| ຈຳນວນຮຸ້ນທັງໝົດ | 1,226,216,765 |
| | *(ປະມານ 613.1 ລ້ານໂດລາ)* |
| **ສະຖິຕິລາຄາຈາກເດືອນມັງກອນ ປີ2013 ຫາ ເດືອນ ມິຖຸນາ ປີ 2013** | |
| ສູງສຸດ (ກີບ/ຮຸ້ນ) | 7,000 |
| ຕໍ່າສຸດ(ກີບ/ຮຸ້ນ) | 5,800 |
| ປະລິມານສະເລ່ຍ (ຮຸ້ນ/ມື້) | 54,732 |
| ອັດຕາສ່ວນການຖືຄອງຂອງຕ່າງປະເທດ (%) | 20% |
| ອັດຕາສ່ວນການຖືຄອງຂອງຕ່າງປະເທດທີ່ຍັງເ | 6.041% ມາຮອດວັນທີ 28 ເດືອນ ມິຖຸນາ 2013 |
| ເງິນປັນຜົນ | |
| 2011 (ກີບ / ຫຸ້ນ) | 448.3 *(after tax)* |
| ລາຄາ ທ້າຍປີ 2011 (ກີບ / ຫຸ້ນ) | 4,200.0 |
| 2012 (ກີບ / ຫຸ້ນ) | 405 *(after tax)* |
| ລາຄາ ທ້າຍປີ 2012 (ກີບ / ຫຸ້ນ) | 5,750.0 |

**ສະເໜີຄວາມຮູ້ເບື້ອງຕົ້ນກ່ຽວກັບບໍລິສັດໃໝ່ ທີ່ມີສະພາບທີ່ຈະເຂົ້າຕະຫຼາດຫຼັກຊັບລາວ**

ບໍລິສັດ ລາວອິນໂດຊາຍນາກູບ ມະຫາຊົນ ມີແຜນຈະເຂົ້າຕະຫຼາດຫຼັກຊັບລາວໃນປີ2012.

| ຂໍ້ມູນທົ່ວໄປຂອງບໍລິສັດ ລາວອິນໂດຊາຍນາກູບ ມະຫາຊົນ | |
|---|---|
| ເອວໄອຈີ | ບໍລິສັດ ລາວອິນໂດຊາຍນາກູບ ມະຫາຊົນ |
| ຂະແໜງ | ການຜະລິດກະສິກຳ |
| ສັນຍາລັກ | LIG |
| ສະຖານະພາບ | ກຳລັງຈະຈົດທະບຽນ |
| ບໍລິສັດທີ່ປຶກສາທາງການເງິນ | ບໍລິສັດທີ່ຄໍ້າປະກັນການຈຳໜ່າຍ |
| ບໍລິສັດທີ່ປຶກສາທາງກົດໝາຍ | Lao Law & Consultant (LLC) |
| ບໍລິສັດທີ່ຄໍ້າປະກັນການຈຳໜ່າຍ | ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ (LXS) |

| | |
|---|---|
| ລາຄາຄາດຄະເນການອອກຮຸ້ນໃໝ່ | 3,200 ກີບ ~ 0.4 ໂດລາ |
| ລາຄາຮຸ້ນທີ່ຄາດຄະເນໃນ 3-6 ເດືອນ | 5,111 ກີບ ~ 0.64 ໂດລາ |
| ຈໍານວນຮຸ້ນທັງໝົດ (ປະຈຸບັນ) | 30,434,500 ຮຸ້ນ |
| ຈໍານວນຮຸ້ນທັງໝົດ (ຫຼັງຈາກການອອກຮຸ້ນຄັ້ງທໍາອິດ) | 40,434,500 ຮຸ້ນ |
| ລາຄາທີ່ແທ້ຈິງ (Par) | 0.25 ໂດລາ |
| ມູນຄ່າຕະຫຼາດ (ປະຈຸບັນ) | 12.17 ລ້ານໂດລາ |
| ມູນຄ່າຕະຫຼາດ (ຫຼັງຈາກການອອກຮຸ້ນຄັ້ງທໍາອິດ) | 16.17 ລ້ານໂດລາ |
| ກໍານົດການຖືຄອງຂອງຕ່າງປະເທດ | 49% |
| % ການຖືຄອງຂອງຕ່າງປະເທດ (ປະຈຸບັນ) | 3.70% |

**ປະຫວັດການເຕີບໂຕຢ່າງແຂງແຮງ ແລະ ໂອກາດໃນການເຕີບໂຕເພື່ອຕອບສະໜອງຄວາມຕ້ອງການຈາກຕະຫຼາດໂລກ**

*ເປັນບໍລິສັດທີ່ຜະລິດແປ້ງມັນຕົ້ນທີ່ໃຫຍ່ທີ່ສຸດໃນ ສປປ ລາວ: ຄວາມສາມາດໃນການຜະລິດແມ່ນ 320 ໂຕນ/ວັນ ຫຼື 115,000 ໂຕນ/ປີ ແລະ ໄດ້ຮັບວັດຖຸດິບຈາກເນື້ອທີ່ການປູກຝັງທັງໝົດ 7,689 ເຮັກຕາ, ໃນນັ້ນ 70 ເປີເຊັນຈາກໂຄງການເຮັດສັນຍາປູກຝັງ ແລະ ອີກ 30 ເປີເຊັນຈາກຊາວກະສິກອນອື່ນໆ ສ່ວນບໍລິສັດທີ່ໃຫຍ່ອັນດັບສອງແມ່ນຜະລິດໄດ້ເກືອບ 100 ໂຕນ/ວັນ

*ການເຕີບໂຕທາງດ້ານລາຍຮັບ ແລະ ຜົນກໍາໄລທີ່ໂດດເດັ່ນ: ໃນໄລຍະ 4 ປີທີ່ຜ່ານມາ ບໍລິສັດໄດ້ຮັກສາອັດຕາການເຕີບໂຕທີ່ສູງຂອງລາຍຮັບ ແລະ ຜົນກໍາໄລຕັ້ງແຕ່ກໍ່ຕັ້ງບໍລິສັດເປັນຕົ້ນມາ. ໃນອີກ 5 ປີຂ້າງໜ້າ ພວກເຮົາຄາດວ່າອັດຕາການເຕີບໂຕສະເລ່ຍຂອງກໍາໄລ ແລະ ລາຍຮັບຈະຢູ່ທີ່ 20 ເປີເຊັນ. ອັດຕາກໍາໄລສຸດທິຈະຢູ່ທີ່ 20-25 ເປີເຊັນ.

*ຄວາມອາດສາມາດຂອງການຂະຫຍາຍເນື້ອທີ່ການຜະລິດ ແລະ ຄວາມສາມາດຂອງການຜະລິດດ້ວຍຄວາມໜາແໜ້ນຂອງປະຊາກອນພຽງ 25 ຄົນ/km², ປະເທດລາວເປັນປະເທດທີ່ມີເນື້ອທີ່ຫຼາຍເໝາະແກ່ການປູກມັນຕົ້ນ ແລະ ດ້ວຍນະໂຍບາຍການສົ່ງເສີມຈາກລັດຖະບານ ບໍລິສັດຈະສາມາດຂະຫຍາຍເນື້ອທີ່ການຜະລິດໄດ້ຢ່າງຫຼວງຫຼາຍ. ບໍລິສັດສາມາດເພີ່ມເນື້ອທີ່ການຜະລິດໄດ້ເປັນ 2-3 ເທົ່າໄດ້ຢ່າງງ່າຍດາຍ

*ທຸລະກິດທີ່ນໍາໃຊ້ຜົນປະໂຫຍດຈາກຊັບພະຍາກອນພາຍໃນເພື່ອສະໜອງໃຫ້ແກ່ຕະຫຼາດທີ່ໃຫຍ່ທີ່ສຸດຂອງໂລກ: ໃຊ້ວັດຖຸດິບພາຍໃນ 100 ເປີເຊັນ ແລະ ສ່ວນໃຫຍ່ແມ່ນສົ່ງອອກໄປປະເທດຈີນ. ຄ່າໃຊ້ຈ່າຍຕ່າງໆເຊັ່ນ ການກະກຽມເນື້ອທີ່ປູກຝັງ ຄ່າແຮງງານ ການຜະລິດ, ຄ່າໄຟຟ້າ, ຄ່າຂົນສົ່ງ ແມ່ນຍັງ

ຕ່ຳຫຼາຍໃນບັນດາປະເທດອ້ອມຂ້າງ ປະຈຸບັນ ບໍລິສັດກໍ່ຍັງບໍ່ສາມາດຕອບສະໜອງຄວາມຕ້ອງການຈາກປະເທດຈີນເທື່ອ

| ຈຸດເດັ່ນທາງດ້ານການເງິນ | | | | | |
|---|---|---|---|---|---|
| ປີ | 2008 | 2009 | 2010 | 2011 (E) | 2012 (E) |
| ຍອດຂາຍ (USD) | 1,244,835 | 5,007,776 | 9,632,032 | 13,291,379 | 17,540,466 |
| ກຳໄລສຸດທິ (USD) | 300,417 | 1484675 | 3592065 | 4519069 | 6139156 |
| ກຳໄລຫຼັງຫັກພາ (USD) | 40389 | 494198 | 1993362 | 2455758 | 3535921 |
| ກຳໄລຕໍ່ຮຸ້ນ (USD) | 34 | 343 | 818 | 635 | 691 |
| ອັດຕາກຳໄລຫຼັງຫັກພາສີ | | 1.12% | 30.30% | 23.20% | 43.90% |
| ອັດຕາການເຕີບໂຕຂອງຍອດຂາຍ | | 402.50% | 92.30% | 35.70% | 34.20% |
| ອັດຕາກຳໄລຮຸ້ນ | | 1000.00% | 138.00% | -22.00% | 8.80% |
| ອັດຕາກຳໄລສຸດ | 26.00% | 9.90% | 20.70% | 18.80% | 20.20% |
| ອັດຕາຜົນຕອບແທນຕໍ່ຜູ້ຖືຮຸ້ນ | 1.70% | 17.20% | 40.90% | 28.70% | 22.00% |
| ອັດຕາຜົນຕອບແທນຕໍ່ຊັບສິນ | 0.60% | 9.90% | 20.70% | 10.60% | 11.40% |

-------------------------------

ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ

# ຄວາມຮູ້ເບື້ອງຕົ້ນຕໍ່ຕະຫຼາດທຶນລາວ


**ບໍລິສັດຫຼັກຊັບລ້ານຊ້າງມະຫາຊົນ (LXS)**

ຢູ່ຊັ້ນ 5, ອາຄານຕະຫຼາດຫຼັກຊັບລາວ ບ້ານໂພນທັນເໜືອ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ

ໂທ: (+856)-21 265 468 ແຟກ: (+856)-21 265 466 ຫຼື (+856)-21 265 465

Email: lanexang@lxs.com.la or lxs_infor@lxs.com.la

**ການຊື້-ຂາຍຫຼັກຊັບ**

ທ່ານ ຮຸນ ຕຶນ ກາວ
ຫົວໜ້າພະແນກນາຍໜ້າຊື້ຂາຍຫຼັກຊັບ
ອີເມວ: cao.ht@lxs.com.la

**ການໃຫ້ຄໍາປຶກສາທາງການເງິນ**

ທ່ານ ໂງ ທຸຽນ ກີ່
ຮອງອໍານວຍການ
ອີເມວ: ky.nt@sbsc.com.vn

**ພາກສ່ວນອື່ນໆທີ່ກ່ຽວຂ້ອງ**

ທ່ານ ສຸລິໄຊ ທິບວົງໄຊ
ຮອງອໍານວຍການ
ອີເມວ: soulixay.t@lxs.com.la